# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ XI

ກອງປະຊຸມຄົບຄະນະ ຄັ້ງທີ 8 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ດໍາເນີນໃນລະຫວ່າງວັນທີ 13-17 ພຶດສະພາ 2024 ທີ່ຫ້ອງວ່າການສູນກາງພັກ ພາຍໃຕ້ການເປັນປະທານຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ.

ກອງປະຊຸມ ໄດ້ດໍາເນີນໄປບົນຈິດໃຈຍົກສູງຄວາມຮັບຜິດຊອບການເມືອງ, ບັນດາສະຫາຍສູນກາງ ໄດ້ສຸມໃສ່ປະກອບຄໍາເຫັນ ດ້ວຍບັນຍາກາດຟົດຟື້ນ, ເລິກເຊິ່ງ, ກົງໄປກົງມາ ແລະ ໄດ້ໃຫ້ທິດຊີ້ນໍາ ຕໍ່ບັນຫາສໍາຄັນ ດັ່ງນີ້:

**1. ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.**

ກອງປະຊຸມ ໄດ້ຕີລາຄາວ່າ ດ້ວຍຄວາມບຸກບືນສູ້ຊົນຂອງທົ່ວພັກ, ທົ່ວລັດ, ທົ່ວກໍາລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ສາມາດເຮັດໃຫ້ການຈັດຕັ້ງປະຕິບັດຄາດໝາຍສູ້ຊົນດ້ານຕ່າງໆ ບັນລຸໄດ້ເປັນສ່ວນຫຼາຍ, 6 ເດືອນຕົ້ນປີ ຄາດຄະເນ GDP ຈະຂະຫຍາຍ ຕົວໃນລະດັບ 4,7%; ການຈັດເກັບລາຍຮັບງົບປະມານ ບັນລຸຕາມແຜນທີ່ສະພາແຫ່ງຊາດຮັບຮອງ, ຫຼາຍທ້ອງຖິ່ນ ໄດ້ເກີນແຜນ... ເຖິງຢ່າງໃດກໍ່ຕາມ ເຫັນວ່າພົບໄດ້ຮັບນັ້ນ ຫຼາຍດ້ານຍັງບໍ່ທັນໜັກແໜ້ນ ແລະ ໝັ້ນຄົງ, ບັນຫາຄັ່ງຮ້ອນ ເປັນຕົ້ນ ເງິນກີບ ສືບຕໍ່ອ່ອນຄ່າ, ອັດຕາແລກປ່ຽນ ແລະ ເງິນເຟີ້ ຍັງຢູ່ໃນລະດັບສູງ, ລາຄາສິນຄ້າ-ຄ່າຄອງຊີບ ຍັງສືບຕໍ່ສູງຂຶ້ນ...

ກອງປະຊຸມ ໄດ້ຍົກໃຫ້ເຫັນແຈ້ງ ສິ່ງທ້າທາຍ ແລະ ກາລະໂອກາດ, ເຊິ່ງຕ້ອງກໍາແໜ້ນ ແລະ ໝູນໃຊ້ຢ່າງປະດິດສ້າງ, ສົມເຫດສົມຜົນ ເຂົ້າໃນການຂຸດຄົ້ນ ແລະ ນໍາໃຊ້ທ່າແຮງບົ່ມຊ້ອນພາຍໃນ ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານຈຸດສຸມໃນ 6 ເດືອນທ້າຍປີ 2024 ດັ່ງນີ້:

(1) ບັນຫາຮີບດ່ວນ ແມ່ນສືບຕໍ່ແກ້ໄຂຄວາມຄັ່ງຮ້ອນ ດ້ານເສດຖະກິດ-ການເງິນ: ເລັ່ງແກ້ໄຂອັດຕາເງິນເຟີ້ ໃຫ້ຫຼຸດລົງ, ດຶງອັດຕາແລກປ່ຽນເງິນຕາຕ່າງປະເທດ ໃຫ້ຕໍ່າລົງ, ເອົາໃຈໃສ່ການຄຸ້ມຄອງເງິນຕາ, ການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ລາຄາສິນຄ້າ ໃຫ້ຖືກຕ້ອງ, ເຂັ້ມງວດ ຕາມກົດໝາຍ ຕິດພັນກັບການຍູ້ແຮງການຜະລິດ-ທຸລະກິດ ດ້ວຍມາດຕະການ, ກົນໄກ, ເຄື່ອງມືດ້ານເສດຖະກິດທີ່ມີແລ້ວ ສົມທົບກັບການຄົ້ນຄວ້າວາງນະໂຍບາຍ, ວິທີການໃໝ່ ດ້ານການເງິນ-ເງິນຕາ (ນະໂຍບາຍດອກເບ້ຍ, ສິນເຊື່ອ, ເງິນເດືອນ),..ເພື່ອແກ້ໄຂບັນຫາ ໃຫ້ແທດເຖິງ ແລະ ເປັນຮູບປະທໍາຕົວຈິງ.

(2) ສຸມໃສ່ແກ້ໄຂໜີ້ສິນ ຢ່າງມີແຜນການລະອຽດ (ການຈັດສັນງົບປະມານ ເພື່ອຮັບປະກັນການໃຊ້ແທນໜີ້ສິນ ຢ່າງເປັນລະບົບ), ບໍ່ເປັນການແກ້ໄຂສະເພາະໜ້າ. ພ້ອມນັ້ນ ສືບຕໍ່ປັບໂຄງສ້າງໜີ້ພາກລັດຄືນໃໝ່, ເດັດຂາດ ບໍ່ໃຫ້ມີການຈ່າຍນອກແຜນງົບປະມານ.

(3) ສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍ ໃຫ້ແກ່ການລົງທຶນ ແລະ ການດໍາເນີນທຸລະກິດ, ແກ້ໄຂທຸກການທ່ວງດຶງ, ຂອດຂັ້ນ, ລະບຽບການ, ກົດໝາຍ ທີ່ຍັງເປັນອຸປະສັກກີດຂວາງ, ຊັກຊ້າ, ບໍ່ໂປ່ງໃສ ໃຫ້ຕົກໄປ; ຍູ້ແຮງການຄຸ້ມຄອງການລົງທຶນໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ, ພົບເຫັນການສວຍໃຊ້ໜ້າທີ່ ທີ່ຜິດລະບຽບກົດໝາຍ ຕ້ອງແກ້ໄຂ ຢ່າງເດັດຂາດ; ໂຄງການໃດໃຫ້ຢຸດຕິດໍາເນີນກິດຈະການ ກໍ່ຄວນເລັ່ງຈັດຕັ້ງປະຕິບັດ ຫຼື ມີມາດຕະການຂັ້ນເດັດຂາດຕໍ່ຜູ້ລະເມີດ; ສືບຕໍ່ວາງນະໂຍບາຍດຶງດູດບັນດາບໍລິສັດໃຫຍ່ ທີ່ມີທຶນຮອນ, ມີເຕັກນິກ ມາລົງທຶນໃຫ້ຫຼາຍຂຶ້ນ ໂດຍສະເພາະໃນນິຄົມອຸດສາຫະກໍາ ແລະ ຮີບຮ້ອນອອກນິຕິກໍາ ກ່ຽວກັບນິຄົມອຸດສາຫະກໍາ ໃຫ້ໄວຂຶ້ນ; ເອົາການເຄື່ອນໄຫວວຽກງານຕ່າງປະເທດ ຕິດພັນກັບການດຶງດູດການລົງທຶນໃຫ້ຫຼາຍຂຶ້ນ; ຂົນຂວາຍນັກລົງທຶນພາຍໃນ ແລະ ຕ່າງປະເທດລົງທຶນ ໃສ່ອຸດສາຫະກໍາປຸງແຕ່ງ ເຊັ່ນ: ໂຮງງານຜະລິດປຸ໋ຍ, ໂຮງງານຜະລິດຫົວອາຫານ, ໂຮງງານປຸງແຕ່ງເຫຼັກ ແລະ ອື່ນໆໃຫ້ໄວ.

(4) ຍູ້ແຮງການຜະລິດ ເປັນສິນຄ້າ, ຄຸ້ມຄອງລາຄາສິນຄ້າ ບໍ່ໃຫ້ຕ່າງຈາກຕົ້ນທຶນຫຼາຍເກີນໄປ, ຊຸກຍູ້ການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການຜະລິດເປັນສິນຄ້າ ໃຫ້ຫຼາຍຂຶ້ນ, ປັບປຸງໂຄງສ້າງການຜະລິດສິນຄ້າ ໂດຍສະເພາະ ສິນຄ້າກະສິກໍາຂອງທ້ອງຖິ່ນ, ສິນຄ້າປາຍແຫຼມ ແລະ ສິນຄ້າກະສິກໍາ ທີ່ເປັນທ່າແຮງ, ຫັນປ່ຽນຈາກການສົ່ງອອກວັດຖຸດິບ ມາເນັ້ນໃສ່ການຜະລິດ-ປຸງແຕ່ງ ແລ້ວສົ່ງອອກ ໃຫ້ແຂງແຮງ; ສົ່ງເສີມການລ້ຽງສັດ ເປັນນິຄົມຂະໜາດໃຫຍ່ ໃຫ້ຫຼາຍຂຶ້ນ; ເລັ່ງຄົ້ນຄວ້າ, ກໍານົດໂຄງປະກອບລາຄາຕົ້ນທຶນການຜະລິດສິນຄ້າ ທີ່ຈໍາເປັນຕໍ່ການດໍາລົງຊີວິດ ໂດຍໃຫ້ປະກອບມີປັດໄຈຕ່າງໆທີ່ສົມເຫດສົມຜົນ, ຈໍາກັດຊ່ອງວ່າງການເອົາລັດເອົາປຽບ ລະຫວ່າງຜູ້ຜະລິດ ແລະ ຜູ້ຈໍາໜ່າຍ; ກວດກາຄືນການປະຕິບັດນະໂຍບາຍສິນເຊື່ອ ຕໍ່ຊາວກະສິກອນ ໃຫ້ເໝາະສົມ (ບໍ່ສູງເກີນໄປ) ລວມທັງແຫຼ່ງທຶນກະຕຸ້ນເສດຖະກິດ ທີ່ອະນຸມັດໃຫ້ແຕ່ລະແຂວງ, ແກ້ໄຂກົນໄກການອະນຸມັດ ໃຫ້ແທດຕົວຈິງ ແລະ ວ່ອງໄວຕື່ມ ເພື່ອສົ່ງເສີມການຜະລິດພາຍໃນໃຫ້ເຂັ້ມແຂງ, ມີຄວາມສາມາດ ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ກຸ້ມຕົນເອງ; ດໍາເນີນມາດຕະການຈໍາກັດ ແລະ ຫ້າມນໍາເຂົ້າສິນຄ້າສໍາເລັດຮູບ ທີ່ສາມາດຜະລິດໄດ້ຢູ່ພາຍໃນ ກໍ່ຄື ສິນຄ້າກະສິກໍາ ທີ່ໄດ້ກໍານົດບັນຊີແລ້ວ ເປັນຕົ້ນ ເຂົ້າ, ຊີ້ນ, ປາ, ໄຂ່, ພືດຜັກ ແລະ ອື່ນໆ, ແຕ່ກໍ່ຕ້ອງມີການໄລ່ລຽງ ແລະ ດຸ່ນດ່ຽງ ຢູ່ແຕ່ລະທ້ອງຖິ່ນ ຢ່າງເໝາະສົມ.

(5) ມອບໃຫ້ ລັດຖະບານ ຄົ້ນຄວ້າແກ້ໄຂ ແລະ ສະໜອງ ແຫຼ່ງວັດຖຸດິບ ເພື່ອນໍາໃຊ້ຖ່ານຫີນເຂົ້າສູ່ການຜະລິດ ຢູ່ພາຍໃນໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນການຜະລິດປຸ໋ຍ ໂດຍໃຫ້ໂຄງການບໍ່ຖ່ານຫີນ ທີ່ໄດ້ຮັບສໍາປະທານຈາກລັດຖະບານ ເປັນຜູ້ສະໜອງ ໂດຍແມ່ນລັດ ເປັນຜູ້ກໍານົດລາຄາ ໃຫ້ສົມເຫດສົມຜົນ;

ສືບຕໍ່ປະສານສົມທົບກັບ ກໍາປູເຈຍ, ຫວຽດນາມ ເພື່ອຮ່ວມກັນສ້າງໂຮງງານໄຟຟ້າພະລັງງານຄວາມຮ້ອນ ໃຫ້ສາມາດດໍາເນີນການໄດ້; ພ້ອມກັນນັ້ນ ຮີບຮ້ອນສັງລວມຂໍ້ມູນກ່ຽວກັບບັນດາເຂື່ອນ ຢູ່ເຂດພາກກາງ ແລະ ພາກໃຕ້ ທີ່ມີຄວາມສາມາດຮີບໂຮມ ແລະ ດຸ່ນດ່ຽງ ການຊົມໃຊ້ພາຍໃນ ແລະ ສົ່ງຂາຍໄປຍັງ ກໍາປູເຈຍ;

ເອົາໃຈໃສ່ຕິດຕາມ, ກວດກາ ສະພາບການສະໜອງກະແສໄຟຟ້າ ໃຫ້ພຽງພໍຕໍ່ການຊົມໃຊ້ໃນສັງຄົມ, ແກ້ໄຂບັນຫາໄຟບໍ່ສະຖຽນ, ໄຟດັບ, ເກີດອັກຄີໄພຈາກໄຟຟ້າ, ຮັບປະກັນການສະໜອງ

ໄຟຟ້າ ໃຫ້ເປັນປົກກະຕິ ໂດຍສະເພາະໄລຍະເປັນປະທານອາຊຽນ.

(6) ຮີບຮ້ອນແກ້ໄຂບາງບັນຫາທີ່ຍັງຄົງຄ້າງ ເຊັ່ນ: ບັນຫາທີ່ດິນ ເພື່ອສ້າງສາງສິນຄ້າ, ຈຸດຄ່ຽນຖ່າຍສິນຄ້າ ຢູ່ແຕ່ລະສະຖານີລົດໄຟຟ້າ ລາວ-ຈີນ; ແກ້ໄຂບັນຫາຂໍ້ຫຍຸ້ງຍາກ ໃນການນຳໃຊ້ສິ່ງອຳນວຍຄວາມສະດວກດ້ານໂຄງລ່າງ ລະຫວ່າງທ່າບົກທ່ານາແລ້ງ ແລະ ບໍລິສັດທາງລົດໄຟ ໃຫ້ມີຄວາມສະດວກກວ່າເກົ່າ ເພື່ອນຳໃຊ້ທ່າແຮງ ແລະ ກາລະໂອກາດ ຈາກເສັ້ນທາງລົດໄຟ ລາວ-ຈີນ ກໍ່ຄືການປະຕິບັດນະໂຍບາຍເຊື່ອມໂຍງ-ເຊື່ອມຈອດ ໃຫ້ໄດ້ຮັບຜົນປະໂຫຍດສູງສຸດ.

(7) ເອົາໃຈໃສ່ປັບປຸງຄຸນນະພາບການສຶກສາ ແລະ ແກ້ໄຂການປະລະການຮຽນ ແລະ ເພີ່ມອັດຕາການເຂົ້າຮຽນໃນທຸກຊັ້ນທຸກສາຍ ດ້ວຍນະໂຍບາຍ, ວິທີການ ແລະ ມາດຕະການ ທີ່ແທດເໝາະກັບສະພາບຂອງປະເທດເຮົາ; ຄຸ້ມຄອງ ແລະ ພັດທະນາແຮງງານລາວ ໃຫ້ມີສີມືຫຼາຍຂຶ້ນ, ສ້າງນະໂຍບາຍທີ່ຈູງໃຈ ເພື່ອຕອບສະໜອງແຮງງານ ໃຫ້ແກ່ການຜະລິດ-ທຸລະກິດພາຍໃນປະເທດຢ່າງພຽງພໍ, ພ້ອມນັ້ນ ກໍ່ເອົາໃຈໃສ່ຄຸ້ມຄອງແຮງງານລາວ ທີ່ໄປອອກແຮງງານຢູ່ຕ່າງປະເທດ ໃຫ້ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ; ສ້າງເງື່ອນໄຂອຳນວຍຄວາມສະດວກຮອບດ້ານ, ມີນະໂຍບາຍດຶງດູດການທ່ອງທ່ຽວ ເພື່ອສ້າງລາຍຮັບ ໃນປີທ່ອງທ່ຽວລາວ; ເອົາໃຈໃສ່ປັບປຸງ ແລະ ຍົກລະດັບຄຸນນະພາບກຸ່ມແຖວບຸກຄະລາກອນທາງການແພດ ໄປຄຽງຄູ່ກັບການປັບປຸງການບໍລິການ ໃຫ້ດີຂຶ້ນເປັນກ້າວໆ ໂດຍສະເພາະການເຂົ້າເຖິງການບໍລິການດ້ານສາທາລະນະສຸກຂອງປະຊາຊົນ ຢູ່ຊົນນະບົດ, ເຂດຫ່າງໄກສອກຫຼີກ, ພ້ອມນັ້ນ ຕິດຕາມ ແລະ ຄວບຄຸມພະຍາດ ທີ່ຈະເກີດຂຶ້ນຕາມລະດູການ ໃຫ້ທັນກັບສະພາບການ.

(8) ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍ ທີ່ກຳນົດໄວ້ ໃນສອງວາລະແຫ່ງຊາດ ໃຫ້ຖືກຕາມທິດ ແລະ ມີປະສິດທິຜົນກວ່າເກົ່າ ໂດຍສະເພາະແມ່ນການສືບຕໍ່ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຢ່າງເອົາຈິງເອົາຈັງ, ດ້ວຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງຂອງທຸກພາກສ່ວນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ; ເອົາໃຈໃສ່ການຄຸ້ມຄອງ ກາຊີໂນ, ການພະນັນອອນລາຍ ກໍ່ຄືການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເປັນໄພສັງຄົມ ໃຫ້ດີຂຶ້ນເປັນກ້າວໆ; ຄົ້ນຄວ້າແຕ່ງຕັ້ງຄະນະກຳມະການແກ້ໄຂບັນຫາຢາເສບຕິດ ຂັ້ນທ້ອງຖິ່ນ ແລະ ສະພາບໍລິຫານກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເພື່ອໃຫ້ການແກ້ໄຂບັນຫາຢູ່ທ້ອງຖິ່ນ ມີຄວາມຄ່ອງຕົວຂຶ້ນ; ສືບຕໍ່ເອົາໃຈໃສ່ເຜີຍແຜ່, ໂຄສະນາສຶກສາອົບຮົມ ກ່ຽວກັບຄວາມຮູ້, ຄວາມເຂົ້າໃຈຕໍ່ຜົນຮ້າຍ ຂອງຢາເສບຕິດ ກໍ່ຄືນິຕິກຳຕ່າງໆທີ່ກ່ຽວຂ້ອງ ຜ່ານສື່ມວນຊົນທຸກປະເພດ ແລະ ສື່ສັງຄົມອອນລາຍ ຢ່າງກວ້າງຂວາງ.

(9) ສືບຕໍ່ປັບປຸງແບບແຜນນຳພາ, ວິທີເຮັດວຽກ ຂອງຄະນະພັກ-ຄະນະນຳ ແລະ ພະນັກງານທຸກຂັ້ນ ໃຫ້ຄ່ອງຕົວກວ່າເກົ່າ, ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ມີລະບຽບວິໄນທີ່ເຂັ້ມງວດ ຕາມກົດລະບຽບ ຂອງພັກ ແລະ ກົດໝາຍ, ເປັນເຈົ້າການແກ້ໄຂປະກົດການຫຍໍ້ທໍ້, ພະຍາດອາດຍາສິດ ໃນກົງຈັກການຈັດຕັ້ງ ຂອງຕົນ ຢ່າງແທດເຖິງ.

**2. ການປະຕິຮູບລັດວິສາຫະກິດ.**

ກອງປະຊຸມ ໄດ້ຕີລາຄາຢ່າງກົງໄປກົງມາ ຕໍ່ສະພາບການດຳເນີນທຸລະກິດ ຂອງລັດວິສາຫະກິດ ໃນໄລຍະຜ່ານມາ ສ່ວນໃຫຍ່ບໍ່ສາມາດເປັນເຈົ້າຕົນເອງ, ການດຳເນີນທຸລະກິດຫຼຸບ

ທຶນ, ສ້າງໜີ້ສິນມະຫາສານ ແລະ ບັນຫາອື່ນໆ; ສາເຫດຕົ້ນຕໍ ແມ່ນຍ້ອນການຄຸ້ມຄອງ-ບໍລິຫານ ບໍ່ເຂັ້ມແຂງ, ຂາດຄວາມເປັນມືອາຊີບ, ຂາດຄວາມໂປ່ງໃສ; ກົນໄກ, ແບບແຜນການນໍາພາຊີ້ນໍາ ຕໍ່ການດໍາເນີນການຜະລິດ-ທຸລະກິດ ບໍ່ຄ່ອງຕົວ, ວິໄນການເງິນ, ການຄຸ້ມຄອງລາຍຮັບ-ລາຍຈ່າຍ ບໍ່ເຂັ້ມງວດ, ມີຊ່ອງຫວ່າງສວຍໂອກາດ...

ກອງປະຊຸມ ໄດ້ໃຫ້ທັດສະນະວ່າ ຕ້ອງສືບຕໍ່ຍຶດໝັ້ນແນວທາງ ການສ້າງເສດຖະກິດລັດ ກໍ່ຄື ສ້າງລັດວິສາຫະກິດໃຫ້ມີຄວາມເຂັ້ມແຂງ, ເປັນເຈົ້າພາທາງໃນລະບົບເສດຖະກິດແຫ່ງຊາດ, ບໍ່ປະປ່ອຍໃຫ້ລັດວິສາຫະກິດ ຕົກຢູ່ໃນສະພາບອ່ອນແອອີກຕໍ່ໄປ; ສ້າງພາກສ່ວນເສດຖະກິດລັດ ໃຫ້ເຂັ້ມແຂງ, ສາມາດເຮັດໜ້າທີ່ບໍລິການສາທາລະນະ ເຊິ່ງພາກສ່ວນເສດຖະກິດອື່ນ ບໍ່ເຮັດ ແລະ ບໍ່ສາມາດເຮັດໄດ້, ພ້ອມກັນນັ້ນ ຕ້ອງສ້າງໃຫ້ໄດ້ບັນດາຫົວໜ່ວຍເສດຖະກິດທີ່ເປັນຄໍຫອຍ, ຖ້າຈໍາເປັນຕ້ອງສ້າງຕັ້ງລັດວິສາຫະກິດໃໝ່ຂຶ້ນຕື່ມອີກ ເພື່ອຄໍ້າປະກັນຄວາມໝັ້ນຄົງ; ກໍານົດການຈັດຕັ້ງ, ການຄຸ້ມຄອງ-ບໍລິຫານລັດວິສາຫະກິດຄືນໃໝ່ ຕາມທິດຫັນໄປສູ່ລະບອບເປັນເຈົ້າຕົນເອງທາງດ້ານການເງິນຢ່າງຂາດຕົວ, ຢຸດເຊົາການເກື້ອກູນຕ່າງໆ, ການຟຸມເຟືອຍຊັບສົມບັດ ຂອງລັດ ແລະ ລວມໝູ່ ຢ່າງສິ້ນເຊີງ, ແກ້ໄຂການຫຸບທຶນ ແລະ ສ້າງໜີ້ສິນຄຸມເຄືອ ຂອງລັດວິສາຫະກິດ, ລົບລ້າງທຸກອະພິສິດ ແລະ ຜົນປະໂຫຍດພິເສດ ຂອງບາງກຸ່ມຄົນໃຫ້ຕົກໄປ; ການປະຕິຮູບລັດວິສາຫະກິດ ຕ້ອງຮັບປະກັນການປົກປ້ອງຊັບສິນຂອງລັດ ບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ຮັບປະກັນຜົນປະໂຫຍດ ຂອງລັດ, ລວມໝູ່ ແລະ ຜູ້ອອກແຮງງານ. ການປະຕິຮູບລັດວິສາຫະກິດ ຕ້ອງດໍາເນີນຕາມຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດ ຢ່າງຄ່ອງແຄ້ວ, ຮັດກຸມ; ຕີລາຄາ, ສໍາຫຼວດ ກວດກາ ຍົກໃຫ້ເຫັນສະພາບ, ສາເຫດ, ຂໍ້ຫຍຸ້ງຍາກ ແລະ ຄວາມຈໍາເປັນຕ້ອງໄດ້ປະຕິຮູບ, ສຶກສາອົບຮົມການເມືອງແນວຄິດ ໄປຄຽງຄູ່ກັບການນໍາໃຊ້ມາດຕະການ ຢ່າງເໝາະສົມ, ສ້າງຄວາມເປັນເອກະພາບ, ສ້າງຄວາມເຂົ້າໃຈທີ່ຖືກຕ້ອງ, ບໍ່ສ້າງໃຫ້ມີບັນຫາໃໝ່ເກີດຂຶ້ນຕື່ມອີກ.

ກອງປະຊຸມ ໄດ້ເປັນເອກະພາບກໍານົດຈຸດສຸມປະຕິຮູບລັດວິສາຫະກິດ ໃຫ້ມີຄວາມເຂັ້ມແຂງໃນຕໍ່ໜ້າ ດັ່ງນີ້:

(1) ເລັ່ງລັດ ການປະຕິຮູບລັດວິສາຫະກິດ ໃຫ້ສໍາເລັດໂດຍໄວ ໂດຍສຸມໃສ່ 3 ລັດວິສາຫະກິດ (ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດການບິນລາວ, ລັດວິສາຫະກິດ ນໍ້າມັນເຊື້ອໄຟລາວ), ຕ້ອງໃຫ້ສໍາເລັດຕາມແຜນຈັດລຽງບູລິມະສິດ, ໄປພ້ອມກັບການປະຕິຮູບລັດວິສາຫະກິດທີ່ຍັງເຫຼືອ ຕາມມະຕິ 10/ລບ ຂອງລັດຖະບານ ແລະ ມະຕິ 58/ສພຊ ຂອງສະພາແຫ່ງຊາດ ໃຫ້ເປັນຮູບປະທໍາ.

(2) ປັບປຸງໂຄງສ້າງດ້ານການຈັດຕັ້ງ ແລະ ກົນໄກ ການຄຸ້ມຄອງລັດວິສາຫະກິດ ຄືນໃໝ່, ປັບປຸງສະພາບໍລິຫານ, ໃຫ້ປະທານສະພາດັ່ງກ່າວ (ຂັ້ນຮອງລັດຖະມົນຕີ) ຕ້ອງເປັນເລຂາຄະນະພັກ ແລະ ເຮັດວຽກປະຈໍາ ຢູ່ລັດສະວາຫະກິດ, ຕ້ອງເລືອກເຟັ້ນເອົາຜູ້ທີ່ມີຄວາມຮູ້ຄວາມສາມາດ, ຮູ້ເຮັດທຸລະກິດ, ຮູ້ການບໍລິຫານຈັດການ ດ້ານການເງິນ, ການຕະຫຼາດ ແລະ ການນໍາພາ-ບໍລິຫານ ແລະ ການຈັດຕັ້ງ-ບຸກຄະລາກອນ ແລະ ຮູ້ນໍາໃຊ້ອົງການກວດສອບອິດສະຫຼະ ເພື່ອເຮັດໃຫ້ສາມາດກວດສອບດ້ານການເງິນຂອງຕົນ; ການຄັດເລືອກພະນັກງານ ຕ້ອງປະຕິບັດຕາມລະບອບການເລືອກເຟັ້ນ ແລະ ປະຕິບັດລະບອບສອບບັນຈຸຜູ້ບໍລິຫານ, ຜູ້ຈັດການ

ເພື່ອຄັດເລືອກໃຫ້ໄດ້ມືອາຊີບ, ເປັນຫຼັກແຫຼ່ງທີ່ເຂັ້ມແຂງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວທຸລະກິດ (ຖ້າມີຄວາມຈຳເປັນ ກໍ່ສາມາດວ່າຈ້າງບາງຕຳແໜ່ງຈາກພາຍນອກ); ຕ້ານ, ສະກັດກັ້ນ ແລະ ກຳຈັດປັດເປົ່າ ປະກົດການຫຍໍ້ທໍ້, ການເສື່ອມຄຸນປ່ຽນທາດໃນກຸ່ມແຖວພະນັກງານ ຂອງລັດວິສາຫະກິດ; ທຸກຫົວໜ່ວຍລັດວິສາຫະກິດ ຕ້ອງມີຄວາມໂປ່ງໃສ, ສາມາດຕິດຕາມ, ກວດກາ, ກວດສອບ ໄດ້ຕະຫຼອດເວລາ; ທຸກຫົວໜ່ວຍລັດວິສາຫະກິດ ຕ້ອງໄດ້ຜ່ານການໄລ່ລຽງເສດຖະກິດປະຈຳປີ ເຖິງແມ່ນວ່າ ຈະມີກຳໄລ ຫຼື ຂາດທຶນ ເພື່ອປະເມີນຜົນ ແລະ ຢັ້ງຢືນປະສິດທິຜົນ ຂອງການດຳເນີນທຸລະກິດ ແລະ ຄວາມສາມາດ ຂອງຄະນະຜູ້ບໍລິຫານ; ຜູ້ບໍລິຫານລັດວິສາຫະກິດ ຕ້ອງມີຄວາມຮັບຜິດຊອບ ຕໍ່ຜົນໄດ້-ຜົນເສຍ ຂອງການດຳເນີນທຸລະກິດ, ການດຳເນີນທຸລະກິດຕ້ອງໃຫ້ມີຜົນກຳໄລ.

(3) ມອບໃຫ້ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ຊອກຫາວິທີທາງອອກຕໍ່ການສະເໜີອອກພັນທະບັດ ເພື່ອຈະລຶບລ້າງໜີ້ ຂອງລັດວິສາຫະກິດ ຫຼື ການອ່ວຍໜີ້, ການຫັນໜີ້ເປັນທຶນໃຫ້ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້, ຈາກນັ້ນ ໃຫ້ລາຍງານ ຕໍ່ກົມການເມືອງສູນກາງພັກ ໃຫ້ທິດຊີ້ນຳຕື່ມ.

(4) ສືບຕໍ່ຄົ້ນຄວ້າ ແລະ ປັບປຸງ ກົດໝາຍ, ນິຕິກຳ ເພື່ອຮອງຮັບການປະຕິຮູບລັດວິສາຫະກິດ ເປັນຕົ້ນການແກ້ໄຂບັນຫາສາຍພົວພັນ ລະຫວ່າງການຄຸ້ມຄອງມະຫາພາກຂອງລັດ ຕໍ່ລັດວິສາຫະກິດ ແລະ ຄວາມເປັນເຈົ້າ, ສິດ ໃນການຄຸ້ມຄອງ-ບໍລິຫານທຸລະກິດ ຂອງລັດວິສາຫະກິດ ໂດຍສະເພາະສິດໃນກຳມະສິດ ຕໍ່ທຶນຮອນ ແລະ ຊັບສິນ ທີ່ລັດມອບໃຫ້ບໍລິສັດດຳເນີນທຸລະກິດ.

(5) ຄະນະປະຕິຮູບລັດວິສາຫະກິດ ສົມທົບກັບພາກສ່ວນກ່ຽວຂ້ອງ ສືບຕໍ່ຄົ້ນຄວ້າ, ຈັດແບ່ງປະເພດລັດວິສາຫະກິດຕ່າງໆ ໃນຈຳນວນ 176 ຫົວໜ່ວຍນັ້ນ ຫົວໜ່ວຍໃດຈະຮັກສາໄວ້, ຮ່ວມຮຸ້ນ, ຂາຍອອກ ຫຼື ຈະຍຸບເລີກ ເພື່ອສະເໜີລັດຖະບານ ກໍ່ຄື ກົມການເມືອງສູນກາງພັກ ພິຈາລະນາ. ສຳລັບຫົວໜ່ວຍທະນາຄານທີ່ສຳເລັດການປະຕິຮູບແລ້ວນັ້ນ ມອບໃຫ້ລັດຖະບານ ຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ໃຫ້ດຳເນີນທຸລະກິດ ຕາມກົດໝາຍ ແລະ ລະບຽບການ ກໍ່ຄືປະຕິບັດພັນທະ ຕໍ່ລັດ ຢ່າງຄົບຖ້ວນ.

**3. ຕີລາຄາກ່ຽວກັບການຍົກສູງຄຸນນະພາບການດຳເນີນຄະດີ ຕາມຂະບວນຍຸຕິທຳ, ຕາມມະຕິເລກທີ 112/ກມສພ, ລົງວັນທີ 2 ມິຖຸນາ 2020 ຂອງກົມການເມືອງສູນກາງພັກ.**

ກອງປະຊຸມ ໄດ້ເປັນເອກະພາບຕີລາຄາສູງ ຕໍ່ບັນດາຜົນສຳເລັດ ທີ່ອົງການຮັບຜິດຊອບດຳເນີນຄະດີຕາມຂະບວນຍຸຕິທຳ ຍາດມາໄດ້ ເປັນຕົ້ນ ກົງຈັກການຈັດຕັ້ງ ແຕ່ສູນກາງເຖິງທ້ອງຖິ່ນ ໄດ້ຮັບການປັບປຸງເປັນລະບົບ ແລະ ໜັກແໜ້ນຂຶ້ນ, ສາມາດເຄື່ອນໄຫວປົກປ້ອງສິດ ແລະ ຜົນປະໂຫຍດ ຂອງລັດ, ລວມໝູ່ ແລະ ພົນລະເມືອງ ໄດ້ດີຂຶ້ນຕື່ມ, ປະກອບສ່ວນເຮັດໃຫ້ສັງຄົມສືບຕໍ່ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ. ແຕ່ພ້ອມກັນນັ້ນ ກໍ່ຍັງໄດ້ໃຫ້ທັດສະນະ ແລະ ຂໍ້ສັງເກດວ່າ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມະຕິ 112 ຍັງມີຄວາມຊັກຊ້າ, ບັນຫາຫຍໍ້ທໍ້ຍັງບໍ່ໄດ້ຮັບການແກ້ໄຂ ຢ່າງຈິງຈັງ ແລະ ບໍ່ສ້າງການຫັນປ່ຽນໃໝ່ທີ່ເຫັນໜ້າໄດ້ເທື່ອ; ການຈັດຕັ້ງປະຕິບັດຕົວຈິງ ຍັງພົບຄວາມຫຍຸ້ງຍາກ ເປັນຕົ້ນ ດ້ານກົງຈັກການຈັດຕັ້ງ, ການເກັບຂໍ້ມູນຫຼັກຖານ, ການພິສູດຫຼັກຖານ ຍັງບໍ່ທັນຮັບປະກັນຄຸນນະພາບ; ກົນໄກການປະສານງານ ລະຫວ່າງສາຍຕັ້ງ-ສາຍຂວາງ ບໍ່ທັນກົມກຽວ, ບໍ່ເປັນເອກະພາບ ແລະ ຊັກຊ້າ; ຄຳຕັດສິນຂອງສານທີ່ໃຊ້ໄດ້

ເດັດຂາດ ມີຫຼາຍກໍລະນີ ບໍ່ສາມາດຈັດຕັ້ງປະຕິບັດໄດ້, ຊັກຊ້າ, ແກ່ຍາວ ແລະ ມີການຮ້ອງຂໍໄປຍັງອົງການອຳນາດລັດ ແລະ ພາກສ່ວນຕ່າງໆ; ພະນັກງານ, ທະນາຍຄວາມຈຳນວນໜຶ່ງ ຍັງສວຍໃຊ້ໜ້າທີ່, ສວຍໃຊ້ຊ່ອງຫວ່າງ ຂອງກົດໝາຍ, ຂາດຄວາມຮັບຜິດຊອບການເມືອງ, ຂາດຈັນຍາບັນ, ຈັນຍາທຳ, ພື້ນຖານໂຄງລ່າງ, ວັດຖຸ-ເຕັກນິກ ຈຳນວນໜຶ່ງ, ອຸປະກອນ, ພາຫະນະເຄື່ອງມື ແລະ ງົບປະມານ ຍັງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງວຽກງານ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ເປັນເອກະພາບ ໃຫ້ທິດຊີ້ນຳບັນຫາຈຳນວນໜຶ່ງ ດັ່ງນີ້:**

(1) ໃຫ້ສືບຕໍ່ຈັດຕັ້ງປະຕິບັດທິດນຳ ຕາມມະຕິ 112 ຂອງກົມການເມືອງສູນກາງພັກ ໃຫ້ເຂົ້າສູ່ລວງເລິກ ແລະ ຖືກທິດ ດຳເນີນການແກ້ໄຂຄະດີ ໃຫ້ຖືກຕ້ອງ, ສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບຂອງລັດ, ຕ້ອງຮັບປະກັນຄວາມເປັນທຳ ແລະ ແກ້ໄຂໄວ; ເອົາການໂຄສະນາເຜີຍແຜ່, ສຶກສາອົບຮົມ, ຍົກສູງສະຕິເຄົາລົບກົດໝາຍ ໃນທົ່ວສັງຄົມ ເປັນກົກ, ເອົາການປ້ອງກັນເປັນເປົ້າໝາຍ ແລະ ເອົາການລົງໂທດ ຕາມກົດໝາຍ ເປັນບັນຫາສຳຄັນ.

(2) ສືບຕໍ່ເພີ່ມທະວີການນຳພາ ຂອງຄະນະພັກແຕ່ລະຂັ້ນ ຕໍ່ວຽກງານດຳເນີນຄະດີ ຕາມຂະບວນຍຸຕິທຳ, ກໍ່ສ້າງພະນັກງານ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ຈັນຍາທຳ, ມີຄວາມບໍລິສຸດຊື່ສັດ ຍັງແມ່ນວຽກງານສຳຄັນ, ຂາດບໍ່ໄດ້; ຍົກສູງຄວາມຮູ້, ຄວາມສາມາດ ດ້ານວິຊາການ, ສ້າງໃຫ້ເປັນມືອາຊີບ, ບໍ່ໃຫ້ພະນັກງານ, ນັກວິຊາການ, ເຈົ້າໜ້າທີ່ສວຍໃຊ້ຊ່ອງວ່າງທາງກົດໝາຍ ໄປເຮັດຜິດ ຫຼື ສວຍໃຊ້ເພື່ອເປົ້າໝາຍອື່ນທີ່ບໍ່ຖືກຕ້ອງ.

(3) ເພີ່ມທະວີວຽກງານ ຕິດຕາມ, ກວດກາ ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່, ພະນັກງານ ທີ່ເຮັດວຽກໃນຂະບວນຍຸຕິທຳ; ກວດກາ ແລະ ປັບປຸງ ກົນໄກ, ການປະສານງານ ລະຫວ່າງອົງການຮັບຜິດຊອບໃນການດຳເນີນຄະດີ; ແກ້ໄຂຂອດອຸດຕັນ, ຖ່ວງດຶງ, ຊັກຊ້າແກ່ຍາວ ໃນຂະບວນການດຳເນີນຄະດີ ຂອງແຕ່ລະອົງການ; ແກ້ໄຂບັນຫາເຮັດພໍໃຫ້ພໍລາວ ເຊິ່ງເປັນການບັ່ນທອນຄວາມເຊື່ອໝັ້ນ ຂອງສັງຄົມ ຕໍ່ລະບົບຍຸຕິທຳ ຂອງພວກເຮົາ; ຕ້ອງມີການສົມທົບກັນ, ກວດກາເຊິ່ງກັນ ແລະ ກັນ ໃຫ້ກົມກຽວ, ເປັນເອກະພາບ ໃນການຕັດສິນຄະດີຂອງສານແຕ່ລະຂັ້ນ ກໍ່ຄືການແກ້ໄຂບັນຫາຕາມຂະບວນຍຸຕິທຳ.

(4) ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ປະຊາຊົນ ເຂົ້າເຖິງຂະບວນຍຸຕິທຳໄດ້ຢ່າງສະດວກ, ຊ່ວຍແນະນຳດ້ານກົດໝາຍ, ບໍ່ຈຳກັດ, ກົດໜ່ວງ ສິດທິອັນຊອບທຳ ຂອງປະຊາຊົນ, ຂອງຜູ້ອັບປະໂຫຍດ; ແກ້ໄຂຄະດີໄປຕາມຂະບວນຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ, ບໍ່ອະນຸຍາດໃຫ້ບຸກຄົນ, ການຈັດຕັ້ງ ຫຼື ອຳນາດໃດໆ ອອກຄຳສັ່ງຢູ່ເໜືອກົດໝາຍ.

(5) ນຳພາຊີ້ນຳການຈັດຕັ້ງ ຂອງສະພາທະນາຍຄວາມ ແລະ ການເຄື່ອນໄຫວ ຂອງທະນາຍຄວາມ ຢ່າງແທດເຖິງ, ສ້າງໃຫ້ເປັນອົງກອນທີ່ເຮັດໜ້າທີ່ປົກປ້ອງກົດໝາຍ, ປົກປ້ອງຄວາມເປັນທຳ ຢ່າງແທ້ຈິງ ດ້ວຍມາດຕະການຄຸ້ມຄອງ ທີ່ຮັດກຸມ, ການເລືອກເຟັ້ນບຸກຄະລາກອນປະກອບໃສ່ສະພາທະນາຍຄວາມ ໃຫ້ໄດ້ຕາມມາດຕະຖານ, ເງື່ອນໄຂ ຄົບຖ້ວນ ແລະ ເຄື່ອນໄຫວຖືກຕ້ອງ ຕາມກົດໝາຍ.

(6) ປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມສັກສິດ, ຄົບຖ້ວນ, ຖືກຕ້ອງຕາມຄວາມເປັນຈິງ ແລະ ຍຸຕິທຳ; ຕ້ອງອະທິບາຍ, ສຶກສາອົບຮົມ, ສ້າງຄວາມເຂົ້າໃຈ ທີ່ຖືກຕ້ອງ, ເປັນທຳໃຫ້ແກ່

ຄູ່ກໍລະນີ ໄປຄຽງຄູ່ກັບການປະຕິບັດມາດຕະການບັງຄັບ ຕາມກົດໝາຍ; ຮັກສາໃຫ້ດີ ແລະ ແກ້ໄຂໃຫ້ໄວ ຊັບສິນທີ່ຖືກອາຍັດ ຫຼື ຮິບເປັນຂອງລັດ, ນຳໃຊ້ໃຫ້ເກີດຜົນປະໂຫຍດ, ບໍ່ປະໄວ້ໃຫ້ເສຍຫາຍ (ປະມູນຂາຍ ຕາມລະບຽບການ); ສຳລັບໂທດປະຫານຊີວິດ, ຫຼັກການ ແມ່ນໃຫ້ຮັກສາບົດລົງໂທດນີ້ໄວ້, ແຕ່ໃຫ້ຄົ້ນຄວ້າ ວິທີການປະຕິບັດ ໃຫ້ເໝາະສົມກັບສະພາບຕົວຈິງ ແລະ ວັດທະນະທຳ ຂອງຊາດລາວ.

(7) ລັດຖະບານ ພິຈາລະນາ ຈັດສັນ ແລະ ເພີ່ມງົບປະມານ, ເພີ່ມໂກຕາບຸກຄະລາກອນ, ພາຫະນະ ແລະ ອຸປະກອນເຄື່ອງມືຕ່າງໆ ທີ່ນຳໃຊ້ເຂົ້າໃນການສືບສວນ-ສອບສວນ ຫຼື ພິສູດຫຼັກຖານ ຕາມຄວາມຈຳເປັນ.

**4. ກ່ຽວກັບການປັບປຸງຄຸນນະພາບການສຶກສາ ແລະ ການແກ້ໄຂບັນຫາການປະລະການຮຽນ, ການຂາດແຄນຄູສອນ.**

ຄະນະບໍລິຫານງານສູນກາງພັກ ໄດ້ທົບທວນຄືນການທີ່ພັກ-ລັດເຮົາ ໄດ້ວາງນະໂຍບາຍ ຖືເອົາ “ການສຶກສາ ໄປກ່ອນກ້າວໜຶ່ງ”, ເອົາ “ຄົນເປັນເປົ້າໝາຍ, ເປັນໃຈກາງ” ໃນການພັດທະນາເສດຖະກິດ-ສັງຄົມ ກໍ່ຄືການກໍ່ສ້າງສັງຄົມນິຍົມ ແມ່ນຍັງຖືກຕ້ອງ, ສາມາດເວົ້າໄດ້ວ່າ ຄຸນນະພາບຂອງການສຶກສາ ແມ່ນປັດໃຈສຳຄັນ ຕັດສິນຄຸນນະພາບ ຂອງຊັບພະຍາກອນມະນຸດ, ຕັດສິນອະນາຄົດ ແລະ ຊະຕາກຳຂອງປະເທດຊາດ. ບົນຈິດໃຈດັ່ງກ່າວນັ້ນ ການປັບປຸງຄຸນນະພາບການສຶກສາ ແລະ ການແກ້ໄຂບັນຫາການປະລະການຮຽນ ແມ່ນບັນຫາສຳຄັນຍຸດທະສາດ ແລະ ທັງເປັນບັນຫາຮີບດ່ວນ ທີ່ຕ້ອງໄດ້ຮັບການແກ້ໄຂໄວ; ຕ້ອງຫັນວິກິດ ຫຼື ການຖົດຖອຍດ້ານການສຶກສາ ທີ່ພວມປະເຊີນໜ້າໃນປະຈຸບັນ ໃຫ້ເປັນໂອກາດ ໃນການປັບປຸງລະບົບການສຶກສາ ຢູ່ປະເທດເຮົາ ໃຫ້ໄດ້ມາດຕະຖານ ພາກພື້ນ ແລະ ສາກົນເທື່ອລະກ້າວ. ກອງປະຊຸມ ໄດ້ເນັ້ນໜັກ ໃຫ້ເອົາໃຈໃສ່ບັນຫາສຳຄັນ ດັ່ງນີ້:

(1) ໃຫ້ທົບທວນຄືນ ແລະ ມີວິທີການແກ້ໄຂ ບັນຫາທີ່ເປັນຍຸດທະສາດ ທີ່ວາງອອກ ຍັງບໍ່ທັນໄດ້ຮັບການພັນລະຫຍາຍ ຢ່າງແຂງແຮງ ເປັນຕົ້ນ ຍັງບໍ່ທັນສົມທົບແໜ້ນ ລະຫວ່າງການນຳໃຊ້, ບຳລຸງກຸ່ມແກ່ວນັກຮຽນຮູ້, ປັນຍາຊົນ ແລະ ແຮງງານເຕັກນິກ ທີ່ມີແລ້ວ ກັບການກໍ່ສ້າງ, ບຳລຸງແຫຼ່ງຊັບພະຍາກອນໃໝ່ ຢ່າງຕໍ່ເນື່ອງ ແລະ ສອດຄ່ອງກັບທິດພັດທະນາຄວາມສາມາດບົ່ມຊ້ອນຂອງປະເທດ ຈຶ່ງເຮັດໃຫ້ເກີດມີສະພາບຂາດແຄນແຮງງານ; ການຄຸ້ມຄອງ, ນຳໃຊ້ທຶນການສຶກສາ (ທັງພາຍໃນ ແລະ ຕ່າງປະເທດ) ຍັງບໍ່ທັນດຸ່ນດ່ຽງ ຫຼື ດັດສົມການກໍ່ສ້າງຄົນ ໃນຂະແໜງທີ່ຈຳເປັນ ແລະ ມີຄວາມຕ້ອງການ ໂດຍສະເພາະແຮງງານທີ່ມີສີມື, ໄປທັນກັບເຕັກໂນໂລຊີ ແລະ ນະວັດຕະກຳໃໝ່;

(2) ສຸມໃສ່ບາງມາດຕະການ ເພື່ອປັບປຸງ ແລະ ຍົກສູງຄຸນນະພາບການສຶກສາ ຄື:

- ບັນຫາຄູ: ຄູເປັນແມ່ພິມ ຂອງຊາດ, ເປັນຜູ້ມີບົດບາດສຳຄັນ ຕໍ່ການສຶກສາ, ຕ້ອງປັບປຸງນະໂຍບາຍ ຊຸກຍູ້, ສົ່ງເສີມ ທີ່ຖືກຕ້ອງ, ເໝາະສົມ ຕໍ່ຄູ, ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ເພື່ອດຶງນັກຮຽນເກັ່ງໄປຮຽນວິຊາຄູ ຕາມທິດ “ນາຍຄູເກັ່ງ ລູກສິດ ຈຶ່ງເກັ່ງ”; ສຸມໃສ່ສ້າງກຸ່ມແກ່ວຄູ-ອາຈານ ໃຫ້ໄດ້ມາດຕະຖານດ້ານວິຊາການ ແລະ ມີຈັນຍາບັນ ໜັກແໜ້ນ ເພື່ອສະໜອງໃຫ້ການສຶກສາທຸກລະດັບ; ເອົາໃຈໃສ່ຄັດເລືອກ, ເລືອກເຟັ້ນ, ສອບບັນຈຸຄູ ທີ່ຮັບປະກັນມາດຕະຖານ, ທົບທວນຄືນລະບອບເງິນເດືອນ, ເງິນອຸດໜູນ, ສະຫວັດດີການ, ສິດ

ທີ່ປະໂຫຍດອື່ນໆຕໍ່ຄູ ຢ່າງສົມເຫດສົມຜົນ;

ແກ້ໄຂບັນຫາຄູອາສາ ແລະ ການຂາດແຄນຄູສອນ ຢູ່ຊົນນະບົດ, ຢູ່ຮາກຖານບ້ານ; ຄູອາສາ ທີ່ໄປສິດສອນໃນເຂດທຸລະກັນດານ, ຫຍຸ້ງຍາກ ຄວນໄດ້ບັນຈຸຊັບຊ້ອນເຂົ້າເປັນລັດຖະກອນຄູ ເປັນກໍລະນີສະເພາະ ແລະ ຕ້ອງຮັບປະກັນການດໍາລົງຊີວິດ ໃນໄລຍະປະຕິບັດໜ້າທີ່, ໃນສະເພາະໜ້າ ໃຫ້ສຸມໃສ່ປະຕິບັດນະໂຍບາຍອຸດໜູນຄູອາສາ ຕາມມະຕິ 09/ລບ ໃຫ້ຖືກຕ້ອງ ແລະ ທັນເວລາ;

ປະຕິບັດນະໂຍບາຍນໍາໃຊ້ຄູຈາກຫຼາຍພາກສ່ວນ ໂດຍສະເພາະເອົາທະຫານ, ຕໍາຫຼວດໄປເປັນຄູ ໂດຍການຝຶກອົບຮົມວິຊາຄູໃຫ້ເຂົາເຈົ້າຄັກແນ່ ຫຼື ເອົາຄູອາສາ ເຂົ້າເປັນທະຫານ, ເປັນຕໍາຫຼວດ ຕິດພັນກັບການເຮັດວຽກງານກໍ່ສ້າງຮາກຖານການເມືອງໄປຄຽງຄູ່ກັນ;

- ບັນຫາຫຼັກສູດ: ຈຸດໝາຍ ຂອງການສຶກສາ ແມ່ນສ້າງຄວາມຮູ້, ປະກອບຄວາມຮູ້ວິຊາອາຊີບ, ຄວາມສາມາດ, ສົ່ງເສີມພອນສະຫວັນ, ເຮັດໃຫ້ຄົນມີຄຸນສົມບັດສິນທໍາປະຕິວັດ, ມີນໍ້າໃຈຮັກເຊື້ອແພງຊາດ, ມີຄ່ານິຍົມຖືກຕ້ອງ ຂອງຄວາມເປັນລາວ, ມີສະຕິຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ, ມີລະບຽບວິໄນ ເຂັ້ມງວດ, ເຄົາລົບກົດໝາຍ, ມີອຸດົມການປະຕິວັດ ແລະ ສ້າງສັງຄົມນິຍົມ; ການສ້າງຫຼັກສູດ ຂອງພວກເຮົາ ກໍ່ຕ້ອງຮັບໃຊ້ການບັນລຸຈຸດໝາຍດັ່ງກ່າວ ຕິດພັນກັບການປະຕິບັດ 5 ຫຼັກມູນການສຶກສາທີ່ໄດ້ກໍານົດ;

ສືບຕໍ່ປັບປຸງເນື້ອໃນຫຼັກສູດ ໃນລະບົບການສຶກສາທຸກລະດັບ, ການສຶກສາ ດ້ານວິຊາອາຊີບ ແລະ ວິຊາການ, ການສຶກສາຊັ້ນສູງ ນັບທັງຫຼັກສູດວິຊາການເມືອງ-ການປົກຄອງ ທີ່ໂອນໄປໃຫ້ກະຊວງສຶກສາທິການ ແລະ ກິລາ; ເນັ້ນຫຼັກສູດສ້າງກໍາລັງແຮງງານ, ກໍາມະກອນ, ນາຍຊ່າງ, ນັກວິຊາການຂະແໜງຕ່າງໆ, ນັກວິທະຍາສາດ-ເຕັກນິກ; ປັບປຸງວິທີການຮຽນ, ການສອນ ໃຫ້ທັນກັບຍຸກສະໄໝ;

- ແກ້ໄຂຄວາມແຕກໂຕນດ້ານການສຶກສາ ລະຫວ່າງຕົວເມືອງ ກັບຊົນນະບົດ, ປະຈຸບັນສະພາບໂຮງຮຽນຂອງລັດຈໍານວນໜຶ່ງ ຖືກປະຮ້າງ (ບ່ອນຮຽນຊຸດໂຊມ, ບໍ່ມີຄົນຮຽນ, ຂາດຄູສອນ,...), ປະຊາຊົນຈໍານວນໜຶ່ງ ບໍ່ພຽງແຕ່ບໍ່ຮູ້ໜັງສື ຫາກຍັງບໍ່ຮູ້ເວົ້າພາສາລາວ, ໃນຂະນະທີ່ຢູ່ທີ່ໂຮງຮຽນເອກະຊົນ ໂດຍສະເພາະໃນຕົວເມືອງໃຫຍ່ ແມ່ນມີມາດຕະຖານ ແລະ ຄຸນນະພາບ ໃນລະດັບທີ່ສູງ ເຊິ່ງເປັນບັນຫາ ທີ່ຕ້ອງໄດ້ດັດສົມ ແລະ ຫຼຸດຜ່ອນຊ່ອງຫວ່າງດັ່ງກ່າວລົງ; ພ້ອມກັນນັ້ນ ກໍ່ຕ້ອງນໍາພາຊີ້ນໍາ ໂຮງຮຽນ ຫຼື ສະຖາບັນການສຶກສາພາກເອກະຊົນ ໄປຕາມແນວທາງ, ນະໂຍບາຍ ຂອງພັກ-ລັດເຮົາ, ຫາກບໍ່ແມ່ນເຫັນແຕ່ກໍາໄລ ຫຼື ແລ່ນນໍາປະລິມານເທົ່ານັ້ນ; ຕ້ອງເພີ່ມທະວີວຽກງານກວດກາ, ຄຸ້ມຄອງ ແລະ ບໍລິຫານການສຶກສາ ໃຫ້ແທດເຖິງ, ຮັບປະກັນການນໍາພາຊີ້ນໍາ ຢ່າງໃກ້ຊິດຕໍ່ບັນດາໂຮງຮຽນ ແລະ ສະຖາບັນການສຶກສາຂັ້ນຕ່າງໆ ຕິດພັນກັບການຍົກສູງຄຸນນະພາບຜູ້ບໍລິຫານການສຶກສາແຕ່ລະຂັ້ນ ເພື່ອໃຫ້ມີຄວາມສາມາດໃນການເຄື່ອນໄຫວຊີ້ນໍາ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການຮຽນ-ການສອນ ຢ່າງເປັນປົກກະຕິ;

- ເພີ່ມທະວີການນໍາພາຊີ້ນໍາ, ຢ່າງໃກ້ຊິດ ຂອງຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ໃນການສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍໃຫ້ແກ່ການສຶກສາ; ປັບປຸງພື້ນຖານໂຄງລ່າງ, ສິ່ງອໍານວຍ, ອຸປະກອນການຮຽນ-ການສອນ ຕາມທິດທັນເປັນທັນສະໄໝ; ແກ້ໄຂບັນຫາຫຍໍ້ທໍ້ໃນຂະແໜງການສຶກສາ (ຊື້ຈ້າງຄະແນນ, ຈ້າງຮຽນ, ຈ້າງເຂົ້າເຮັດວຽກ); ແກ້ໄຂບັນຫາແຫຼ່ງມົ້ວສຸມ

ໃກ້ໂຮງຮຽນ (ຮ້ານບັນເທີງ, ຮ້ານເກມ, ຢາເສບຕິດ ແລະ ອື່ນໆ), ເດັດຂາດຫ້າມບໍ່ໃຫ້ເດັກບໍ່ເຖິງກະສຽນອາຍຸ ເຂົ້າເຖິງສິ່ງມຶນເມົາ ແລະ ສະຖານບັນເທີງ...

- ເພີ່ມທະວີການມີສ່ວນຮ່ວມ ຂອງຄອບຄົວ, ຂອງສັງຄົມ ຕໍ່ວຽກງານພັດທະນາການສຶກສາ, ຕ້ອງຖືສໍາຄັນ ແລະ ເຮັດຄູ່ຂະໜານກັນ ລະຫວ່າງການສຶກສາໃນໂຮງຮຽນ ກັບການສຶກສາອົບຮົມ, ກໍ່ສ້າງໃນຄອບຄົວ ແລະ ຢູ່ໃນສັງຄົມ, ສາມສະຖາບັນນີ້ ຕ້ອງເປັນເອກະພາບອັນໜຶ່ງອັນດຽວກັນ;

(3) ຕໍ່ບັນຫາການປະລະການຮຽນ: ຄົ້ນຄວ້າ ແລະ ປະຕິບັດນະໂຍບາຍສະເພາະ ຕໍ່ນັກຮຽນຜູ້ທຸກຍາກ, ຜູ້ດ້ອຍໂອກາດ ກໍ່ຄືເດັກນ້ອຍ ຢູ່ເຂດທຸລະກັນດານ, ຫ່າງໄກສອກຫຼີກ, ເຂດພູດອຍຊົນເຜົ່າ; ພ້ອມກັນນັ້ນ ກໍ່ເອົາໃຈໃສ່ ຈັດສັນອາຊີບຕິດພັນການຜະລິດເປັນສິນຄ້າໃຫ້ຄອບຄົວ ແລະ ການສ້າງຕົວເມືອງນ້ອຍໃນຊົນນະບົດ; ເສີມຂະຫຍາຍຄຸນປະໂຫຍດ ແລະ ບົດຮຽນ ຂອງໂຮງຮຽນກິນນອນຊົນເຜົ່າ; ແກ້ໄຂສະຖານທີ່ຫ້ອງຮຽນບໍ່ໃຫ້ຄັບແຄບເກີນໄປ, ກໍ່ສ້າງຫໍພັກນັກຮຽນ, ເຮືອນຄົວລວມ ຢູ່ຈຸດໂຮງຮຽນທີ່ມີນັກຮຽນເດີນທາງມາແຕ່ໄກ, ຫ້ອງສະໝຸດ, ອຸປະກອນການຮຽນ-ການສອນ, ອຸປະກອນກິລາ ຕອບສະໜອງໄດ້ຂັ້ນພື້ນຖານ;

- ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງການສຶກສານອກລະບົບ, ສ້າງກິດຈະກໍານອກຫຼັກສູດໃຫ້ຫຼາຍຂຶ້ນ ຫຼື ມີເວທີໃຫ້ນັກຮຽນ ໄດ້ມີກິດຈະກໍາແລກປ່ຽນ, ໄດ້ສະແດງອອກຫຼາຍຂຶ້ນ ແລະ ແທດເໝາະກັບໄວຂອງເຂົາເຈົ້າ ເພື່ອສ້າງແຮງຈູງໃຈໃນການຮຽນ;

- ເອົາການສຶກສາອົບຮົມ ໃຫ້ສັງຄົມ, ຄອບຄົວ ມີຄວາມເຂົ້າໃຈ ແລະ ໃຫ້ຄວາມສໍາຄັນ ຕໍ່ການສຶກສາໃຫ້ຫຼາຍຂຶ້ນ, ຊຸກດັນ ແລະ ສະໜັບສະໜູນ ໃຫ້ລູກຫຼານບໍ່ປະລະການຮຽນ; ສະຖາບັນການສຶກສາ ແລະ ຄູອາຈານ ຕ້ອງເພີ່ມທະວີ ເອົາໃຈໃສ່ ໃນການເຂົ້າເຖິງນັກຮຽນນັກສຶກສາ ທີ່ມີບັນຫາສະເພາະຢ່າງແທດເຖິງ ແລະ ກໍາໄດ້ບັນຫາຂອງເຂົາ ເພື່ອຊອກວິທີທາງແກ້ໄຂຊ່ວຍ, ບໍ່ປະປ່ອຍໃຫ້ເຂົາເຈົ້າແກ້ໄຂບັນຫາຕາມລໍາພັງ ແລະ ປ່ອຍປະໃຫ້ຕົກ ຢູ່ສະພາບຮຽນບໍ່ໄດ້;

- ສືບຕໍ່ປະຕິບັດມາດຕະການຫ້າມບໍ່ໃຫ້ມີສະຖານບັນເທີງ, ຮ້ານຂາຍເຄື່ອງດື່ມ-ສິ່ງມຶນເມົາ, ຮ້ານເກມ, ການພະນັນທຸກຊະນິດ,... ໃກ້ສະຖານການສຶກສາ; ເອົາໃຈໃສ່ສຶກສາອົບຮົມ ເພື່ອສ້າງຄວາມເຊື່ອໝັ້ນ ຕໍ່ລະບົບການສຶກສາ ແລະ ຜົນປະໂຫຍດຈາກການສຶກສາ ຢູ່ໃນສັງຄົມ ໃຫ້ກວ້າງຂວາງ;

- ສືບຕໍ່ມອບໝາຍ ແລະ ແບ່ງຄວາມຮັບຜິດຊອບ ໃນການເສີມຂະຫຍາຍບົດບາດ ຂອງແນວໂຮມ, ຜູ້ຊົງຄຸນວຸດທິ, ເຈົ້າກົກເຈົ້າເຫຼົ່າ, ບັນດາອົງການຈັດຕັ້ງມະຫາຊົນ ໃນການນໍາພາ, ສຶກສາອົບຮົມ ພໍ່ແມ່ປະຊາຊົນ ໃຫ້ມີສ່ວນຮ່ວມໃນວຽກງານສຶກສາ, ການປຸກສ້າງ, ບໍາລຸງຮັກສາໂຮງຮຽນ ກໍ່ຄື ຊ່ວຍພະນັກງານ, ຄູ-ອາຈານ ໃນການປະຕິບັດໜ້າທີ່, ລະດົມກໍາລັງແຮງ ຈາກສັງຄົມ, ພາກທຸລະກິດ ເພື່ອຍູ້ຂະບວນການ ການຮຽນ-ການສອນ ກໍ່ຄືວຽກງານວັດທະນະທໍາ-ສັງຄົມ ຢູ່ຊຸມຊົນ ຂອງຕົນ ໃຫ້ແຂງແຮງ;

- ມອບໃຫ້ລັດຖະບານ ຄົ້ນຄວ້າຈັດສັນງົບປະມານ ໃຫ້ຂະແໜງການສຶກສາ ແຕ່ລະປີໃຫ້ເພີ່ມຂຶ້ນ ຢ່າງສົມເຫດສົມຜົນ ຕາມກົດໝາຍກໍານົດ. ພ້ອມນັ້ນ ໃຫ້ອົງການປົກຄອງທ້ອງຖິ່ນ ຈັດສັນເອົາງົບປະມານເກີນແຜນແຕ່ລະປີ ແກ້ໄຂວຽກງານສຶກສາໃນທ້ອງຖິ່ນຕົນ.

**5. ການກະກຽມເອກະສານຕົ້ນຕໍ ຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.**

ກອງປະຊຸມ ໄດ້ປະກອບຄວາມເຫັນຢ່າງກວ້າງຂວາງ ຕໍ່ໂຄງຮ່າງ ແລະ ເນື້ອໃນໃຫຍ່ເບື້ອງຕົ້ນ ຮ່າງລາຍງານການເມືອງ, ໂຄງຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແລະ ສະຫຼຸບ 40 ປີແຫ່ງການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການ ຂອງພັກ ຕໍ່ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ໂດຍພື້ນຖານກອງປະຊຸມ ໄດ້ເຫັນດີ ແລະ ເປັນເອກະພາບ ຮັບຮອງເອົາໂຄງຮ່າງ ແລະ ເນື້ອໃນດັ່ງກ່າວ, ແຕ່ໃຫ້ສັບຊ້ອນ, ຈັດວາງເນື້ອໃນແຕ່ລະບັນຫາ ໃຫ້ເປັນລະບົບກວ່າເກົ່າ.

ພາຍຫຼັງປັບປຸງແລ້ວ ໃຫ້ອະນຸກຳມະການເນື້ອໃນ ແລະ ຄະນະຮັບຜິດຊອບ ສືບຕໍ່ຄົ້ນຄວ້າ ແລະ ນຳເອົາຮ່າງເອກະສານດັ່ງກ່າວ ລົງທາບທາມຄວາມເຫັນ ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອລະດົມຄວາມຄິດ, ເສີມຂະຫຍາຍປະຊາທິປະໄຕ ໃນທົ່ວພັກ ແລະ ການມີສ່ວນຮ່ວມ ຂອງທຸກພາກສ່ວນ ຢ່າງກວ້າງຂວາງ, ເລິກເຊິ່ງ.

**6. ກອງປະຊຸມ ໄດ້ມອບໃຫ້ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ຊີ້ນຳລັດຖະບານ, ອົງການ ຂອງພັກ ແລະ ລັດ, ຄະນະພັກແຕ່ລະຂັ້ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ແຕ່ນີ້ ຮອດກອງປະຊຸມຄົບຄະນະ ຄັ້ງທີ 9 ໃນທ້າຍປີ 2024 ດັ່ງນີ້:**

(1) ຊີ້ນຳລັດຖະບານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນພັນລະຫຍາຍ, ຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກສະບັບນີ້ ເຂົ້າສູ່ພາກປະຕິບັດຕົວຈິງໂດຍໄວ;

(2) ສືບຕໍ່ຊີ້ນຳ ການແກ້ໄຂບັນຫາຄັ່ງຄ້າງ ດ້ານເສດຖະກິດ-ການເງິນ ຕາມການຕົກລົງ ຂອງກອງປະຊຸມຄັ້ງນີ້ ໃຫ້ມີການຫັນປ່ຽນ ໃນທ່ວງທ່າທີ່ດີຂຶ້ນກວ່າເກົ່າ;

(3) ສືບຕໍ່ຊີ້ນຳການຫັນລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃຫ້ແຂງແຮງ ແລະ ເປັນຂະບວນຟົດຟື້ນກວ້າງຂວາງ; ເອົາໃຈໃສ່ປັບປຸງກຳລັງປະກອບອາວຸດ, ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍທາງສັງຄົມ, ແກ້ໄຂໄພສັງຄົມຕ່າງໆ ໂດຍສະເພາະບັນຫາຢາເສບຕິດ ຢ່າງຕັ້ງໜ້າກວ່າເກົ່າ;

(4) ສືບຕໍ່ຊີ້ນຳ ການພັນລະຫຍາຍມະຕິ ຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍສືບຕໍ່ຍູ້ແຮງການພັນລະຫຍາຍແນວທາງປ່ຽນແປງໃໝ່ ສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາ ຂອງພັກ ສະບັບເລກທີ 05/ຄບສພ, ລົງວັນທີ 5 ກັນຍາ 2023 ແລະ ມະຕິວ່າດ້ວຍສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ໃຫ້ເຂົ້າສູ່ຕົວຈິງ, ສ້າງທ່ວງທ່າທີ່ດີຂຶ້ນ ເພື່ອກຽມຄວາມພ້ອມດ້ານຕ່າງໆ ກ້າວເຂົ້າສູ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ;

(5) ຊີ້ນຳການກະກຽມ, ປັບປຸງລັດຖະທຳມະນູນ ແລະ ກົດໝາຍກ່ຽວຂ້ອງຕ່າງໆ;

(6) ສືບຕໍ່ຊີ້ນຳການກະກຽມກອງປະຊຸມໃຫຍ່ 3 ຂັ້ນ ໂດຍສະເພາະ ແມ່ນຂັ້ນຮາກຖານ ແລະ ຂັ້ນເມືອງ ໃຫ້ຮັບປະກັນທິດນຳທີ່ກຳນົດໄວ້; ກະກຽມສະຫຼຸບຕີລາຄາ, ຖອດຖອນບົດຮຽນ ເພື່ອກ້າວເຂົ້າສູ່ກອງປະຊຸມໃຫຍ່ ອົງຄະນະພັກ ແຂວງ, ກະຊວງ ແລະ ອົງການ ຕໍ່ໄປ;

(7) ຊີ້ນຳການກະກຽມ ແລະ ດຳເນີນຊີວິດການເມືອງພາຍໃນສູນກາງ ປະຈຳປີ 2024

ແລະ ດຳເນີນການກະກຽມບຸກຄະລາກອນ ກອງປະຊຸມໃຫຍ່ ອົງຄະນະພັກ ແຂວງ, ກະຊວງ, ອົງການ ແລະ ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ;

(8) ຊີ້ນຳການເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍ ບັນດາສົນທິສັນຍາ, ສັນຍາ, ການຕົກລົງ ຂອງການນຳພັກ-ລັດ ກັບພັກເພື່ອນມິດຍຸດທະສາດ, ບັນດາປະເທດເພື່ອນມິດ ໃຫ້ເຂົ້າສູ່ວຽກງານຕົວຈິງ, ຜັນຂະຫຍາຍເປັນໂຄງການ, ແຜນປະຕິບັດ ເປັນແຕ່ລະໜ້າວຽກລະອຽດ ຂອງແຕ່ລະພາກສ່ວນ, ມີການມອບໝາຍ, ແບ່ງຄວາມຮັບຜິດຊອບ, ກຳນົດເວລາ ຢ່າງຈະແຈ້ງ ແລະ ຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດ ໃຫ້ເປັນປົກກະຕິ ແລະ ໄດ້ຮັບຜົນດີ;

(9) ຊີ້ນຳການກະກຽມ ໃຫ້ແກ່ການເປັນປະທານໝູນວຽນ ອາຊຽນ ຂອງ ສປປ ລາວ ໃນ 2024 ໃຫ້ປະສົບຜົນສຳເລັດ ເປັນຢ່າງດີ;

(10) ຊີ້ນຳການຍູ້ຂະບວນການກະກຽມສະເຫຼີມສະຫຼອງ 3 ວັນປະຫວັດສາດສຳຄັນ ຂອງພັກ, ຂອງຊາດ ໃນປີ 2025 ໃຫ້ເປັນຂະບວນການຟົດຟື້ນ.

ຄະນະບໍລິຫານງານສູນກາງພັກ ຮຽກຮ້ອງມາຍັງຄະນະພັກ, ອົງການປົກຄອງແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ທົ່ວປວງຊົນລາວ ຈົ່ງພ້ອມກັນເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ຍົກສູງຄວາມຮັບຜິດຊອບການເມືອງ ເພື່ອຈັດຕັ້ງການເຊື່ອມຊຶມ, ກຳແໜ້ນ ແລະ ຜັນຂະຫຍາຍ ຈັດຕັ້ງປະຕິບັດ ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ XI ເຂົ້າສູ່ຂະບວນການວຽກງານຕົວຈິງ ແລະ ຢ່າງມີປະສິດທິຜົນ.

ນະຄອນຫຼວງວຽງຈັນ, ວັນທີ 03 ມິຖຸນາ 2024

ຕ. ຄະນະບໍລິຫານງານສູນກາງພັກ

ເລຂາທິການໃຫຍ່

ທອງລຸນ ສີສຸລິດ